## ປະທານສະພາແຫ່ງຊາດ ຮັບຜູ້ຕ່າງໆໜ້າທະນາຄານໂລກອຳລາ.



*(ຂປລ): ທ່ານ ທອງສິງ ທຳມະວົງ, ປະທານສະພາແຫ່ງ ໄດ້ໃຫ້ກຽດຕ້ອນຮັບທ່ານ ອິລັງໂກວານພັດ ຈະມູຕູ, ຜູ້ຕ່າງໜ້າຈາກອົງການທະນາຄານໂລກ ປະຈຳ ສປປ ລາວ ເພື່ອອຳລາ ໃນວັນທີ 12 ສິງຫາ 2010 ຢູ່ທີ່ຫໍສະພາແຫ່ງຊາດ ໃນໂອກາດທີ່ຈະສິ້ນສຸດການປະຕິບັດໜ້າທີ່ຢູ່ ສປປ ລາວ.

ທ່ານປະທານສະພາແຫ່ງຊາດ ທອງສິງ ທຳມະວົງ ໄດ້ສະແດງຄວາມຊົມເຊີຍ ແລະຕີລາຄາສູງ ຕໍ່ການປະຕິບັດໜ້າທີ່ ຂອງທ່ານຜູ້ຕ່າງໜ້າຂອງອົງການ ທະນາຄານໂລກ ຢູ່ ສປປ ລາວ ຊຶ່ງຕະຫຼອດໄລຍະເວລາດັ່ງກ່າວທ່ານໄດ້ເຄື່ອນໄຫວວຽກງານຢ່າງຕັ້ງໜ້າ ເພື່ອເປັນການປະກອບສ່ວນສຳຄັນ ເຂົ້າໃນການເສີມຂະຫຍາຍສາຍພົວພັນ ແລະ ການຮ່ວມມືລະຫ່ວາງ ສປປ ລາວ ແລະ ທະນາຄານໂລກ ໃຫ້ນັບມື້ຈະເລີນງອກງາມ. ສປປ ຫລາວ ແລະ ທະນາຄານໂລກ ໄດ້ມີການຮ່ວມມືທີ່ດີນຳກັນມາໂດຍຕະຫຼອດໄລຍະຜ່ານມາ. ອົງການທະນາຄານໂລກໄດ້ໃຫ້ການຊ່ວຍເຫຼືອອັນລ້ຳຄາ ທາງດ້ານທຶນຮ້ອນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃນ ສປປ ລາວ ພ້ອມນີ້ທ່ານປະທານສະພາແຫ່ງຊາດ ຍັງໄດ້ອວຍພອນໃຫ້ຜູ້ຕ່າງໜ້າອົງການທະນາຄານໂລກກັບຄືນປະ ເທດ ດ້ວຍຄວາມສະຫວັດດີພາບ ແລະ ປະສົບຜົນສຳເລັດອັນມີກຽດຂອງທ່ານ.

ໂອກາດນີ້ທ່ານ ໂອລັງໂກວານ ພັດຈະມູຕູ ກໍ່ໄດ້ສະແດງຄວາມຂອບໃຈ ຕໍ່ການຕ້ອນຮັບອັນອົບອຸ່ນ ຂອງທ່ານປະທານສະພາແຫ່ງຊາດ ໃນຄັ້ງນີ້ກໍ່ຄືບັນດາການນຳຂັ້ນສູງ ແລະ ພະນັກງານທີ່ກ່ຽວຂ້ອງຂອງລາວທີ່ໄດ້ໃຫ້ຊ່ວຍການຊ່ວຍເຫຼືອ, ຮ່ວມືສະໜັບສະໜູນ ແລະ ອຳນວຍຄວາມສະດວກເຮັດໃຫ້ການປະຕິບັດໜ້າທີ່ຄັ້ງນີ້ໄດ້ປະສົບຜົນສຳເລັດເປັນຢ່າງດີ.